# ວັກ F:
# ບົດຮຽນເພື່ອສອບເສັງສຳຣັບຄຳຖາມພົນລະເມືອງ (ປະວັດສາດແລະຣັດຖະບານ)

**ເລີ່ມແຕ່ວັນທີ 1ເດືອນຕຸລາ, ປີ 2008, ຫ້ອງການບໍຣິການສັນຊາດແລະຄົນເຂົ້າເມືອງຂອງສະຫະຣັດ (USCIS) ຈະເລີ່ມໃຊ້ ຂໍ້ສອບການປ່ຽນສັນຊາດໃໝ່. ທ່ານຈະໃຊ້ສະບັບໃດ?**

| **ຂໍ້ສອບປະຈຸບັນ** | ທ່ານເປັນຄົນເລືອກ | **ຂໍ້ສອບໃໝ່** |
|---|---|---|
| ການສອບຂອງທ່ານ ກ່ອນ **ວັນທີ 1ເດືອນຕຸລາ, ປີ 2008** | ທ່ານຂໍຣ້ອງກ່ອນ **ວັນທີ 1ເດືອນຕຸລາ, ປີ 2008**, *ແຕ່ຖືກສຳພາດຣະຫວ່າງ* **ວັນທີ 1 ເດືອນຕຸລາ, ປີ 2008** ແລະ **ວັນທີ 1ເດືອນຕຸລາ, ປີ 2009** | ທ່ານຂໍຣ້ອງຫລັງ **ວັນທີ 1ເດືອນຕຸລາ, ປີ 2008** ການສຳພາດຂອງທ່ານ ຫລັງຈາກ **ວັນທີ 1ເດືອນຕຸລາ, ປີ 2009** |

ທ່ານຕ້ອງສາມາດອ່ານໄດ້, ແລະສົນທະນາປາກເວົ້າເປັນພາສາອັງກິດໄດ້.ທ່ານຍັງຕ້ອງໄດ້ຮູ້ປະວັດສາດແລະຣັດຖະບານຂອງປະເທດ ສະຫະຣັດນຳອີກ(ເອີ້ນວ່າ *ພົນລະເມືອງທັງຫລາຍ*).

ຄວາມຊຳນານຕ່າງໆດ້ານພາສາອັງກິດຂອງທ່ານຈະໄດ້ຖືກທົດສອບຕາມວິທີຕ່າງໆຢູ່ລຸ່ມນີ້ຄື:

- **ການອ່ານ** – ທ່ານຈະຖືກບອກໃຫ້ອ່ານພາສາອັງກິດໜຶ່ງປະໂຍກ. ທ່ານຈະຖືກເອົາໃຫ້ເລືອກສາມປະໂຍກ. ທ່ານຕ້ອງອ່ານປະໂຍກໜຶ່ງໃຫ້ໄດ້ຢ່າງຖືກຕ້ອງ.
- **ການຂຽນ** - ທ່ານຈະຖືກບອກໃຫ້ຂຽນພາສາອັງກິດໜຶ່ງປະໂຍກ. ທ່ານຈະຖືກເອົາໃຫ້ເລືອກສາມປະໂຍກ. ທ່ານຕ້ອງຂຽນປະໂຍກໜຶ່ງໃຫ້ໄດ້ຢ່າງຖືກຕ້ອງ.
- **ການປາກເວົ້າ**- ເຈົ້າໜ້າທີ່ຫ້ອງການ USCIS ຈະທົດສອບຄວາມສາມາດປາກເວົ້າພາສາອັງກິດຂອງທ່ານ ຕອນທີ່ທ່ານຕອບຄຳຖາມກ່ຽວກັບທ່ານເອງພ້ອມທັງໃບຄຳຮ້ອງຂອງທ່ານຕອນທີ່ສຳພາດນັ້ນ.

ທ່ານຍັງຖືກບອກໃຫ້ຕອບປາກເປົ່າໃນຊຸດຄຳຖາມພົນລະເມືອງຕ່າງໆ ເພື່ອທົດສອບຄວາມເຂົ້າໃຈຂອງທ່ານໃນປະວັດສາດແລະຣັດຖະບານຂອງສະຫະຣັດ. ຈະມີຢູ່ 10 ຄຳຖາມ. ເພື່ອໃຫ້ຜ່ານ, ທ່ານຕ້ອງຕອບໃຫ້ຖືກຕ້ອງ 6 ຂໍ້ໃນບັນດາ 10 ຂໍ້ນັ້ນ.

ຖ້າທ່ານຫາກອາຍຸຢ່າງໜ້ອຍ 65 ປີແລະໄດ້ຢູ່ຢ່າງຖືກຕ້ອງຕາມກົດໝາຍໂດຍຖາວອນ (ຄົນທີ່ໄດ້ບັດຂຽວ) ຢ່າງໜ້ອຍເປັນເວລາ 20 ປີ, ທ່ານສາມາດຮຽນຄຳຖາມຕ່າງໆໂດຍລຸດຈຳນວນໄດ້.

ຄຳຖາມຕົວຢ່າງຕ່າງໆຢູ່ລຸ່ມນີ້ ທ່ານອາດຖືກຖາມຕອນສຳພາດປ່ຽນສັນຊາດ. ຄຳຖາມຕົວຢ່າງທີ່ໃຊ້ສອບໃນປະຈຸບັນ ແມ່ນໄດ້ຂຽນລົງໄວ້ກ່ອນ, ແລະຕິດຕາມດ້ວຍຄຳຖາມຕົວຢ່າງທີ່ໃຊ້ສອບໃໝ່.

## ຄຳຖາມບົດຮຽນຕ່າງໆສຳຣັບຂໍ້ສອບເປັນສັນຊາດສະບັບປະຈຸບັນ

ບາງຄຳຖາມແມ່ນມີຄຳຕອບຕ່າງໆບອກໃວ້. ທັງນີ້ກໍ່ຍ້ອນມີອາດຄຳເວົ້າຫລາຍວິທີຕສິ່ງດຽວກັນຫລືອາດຍ້ອນມີຄຳຕອບເປັນໄປໄດ້ຫລາຍກວ່າໜຶ່. ທ່ານພຽງແຕ່ຖືກຮຽກຮ້ອງໃຫ້ຕອບແຕ່ຢ່າງດຽວ, *ເວັ້ນເສັຽແຕ່ຖືກຖາມພິເສດຊຶ່ງຮຽກຮ້ອງໃຫ້ຕອບຫລາຍກວ່າ*. ທ່ານຈະຖືກຖາມສິບຄຳຖາມແລະທ່ານ ແຕ່ທ່ານຕ້ອງຕອບໃຫ້ຖືກທົກຂໍ້ໃນຈຳນວນສິບຂໍ້.

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| **AMERICAN GOVERNMENT QUESTIONS** | |
| ຄຳຖາມຕ່າງໆກ່ຽວກັບການປົກຄອງອະເມຣິກັນ | |
| **Principles of American Democracy** | |
| ຫລັກການປະຊາທິປະໄຕຕ່າງໆຂອງອະເມຣິກັນ | |
| 1. What is the supreme law of the land? | The Constitution |
| 1. ແມ່ນຫຍັງເປັນກົດໝາຍສູງສຸດຂອງປະເທດ? | ຣັດຖະທຳມະນູນ |
| 2. What does the Constitution do? | Sets up the government; defines the government; protects basic rights of Americans |
| 2. ຣັດຖະທຳມະນູນເຮັດຫຍັງແດ່? | ຈັດຕັ້ງຣັດຖະບານ; ຈຳກັດວົງການຣັດຖະບານ; ປົກປ້ອງສິດທິພື້ນຖານຕ່າງໆຂອງປະສາກອນ |
| 3. The idea of self-government is in the first three words of the Constitution. What are these words? | "We the People" |
| 3. ແນວຄິດຂອງ ການປົກຄອງ-ຕົນເອງ ແມ່ນຢູ່ໃນສາມຄວາມ ເບື້ອງຕົ້ນຂອງຣັດຖະທຳມະນູນ. ຄວາມເຫລົ່ານີ້ແມ່ນຫຍັງ? | "ປະຊາຊົນພວກເຮົາ" |
| 4. What is an amendment? | A change (to the Constitution); an addition (to the Constitution) |
| 4. ການດັດແປງແມ່ນຫຍັງ? | ການປ່ຽນແປງຢ່າງໜຶ່ງ (ໃນທຳມະນູນ); ເປັນຂໍ້ເພີ່ມເຕີມໜຶ່ງ (ຕໍ່ຣັດຖະທຳມະນູນ) |
| 5. What do we call the first 10 amendments to the Constitution? | The Bill of Rights |
| 5. ພວກເຮົາເອີ້ນການດັດແປງສິບຂໍ້ທຳອິດຕໍ່ຣັດຖະທຳມະນູນ ນັ້ນວ່າແນວໃດ? | ຍັດຕິວ່າດ້ວຍສິດທິຕ່າງໆ |
| 6. What is <u>one</u> right or freedom from the First Amendment? | Speech; religion; assembly; press; petition the government |
| 6. ສິດທິຫລືອິສຣະພາບຢ່າງນຶ່ງຈາກການແກ້ໄຂທຳມະນູນທຳອິດນັ້ນ ແມ່ນຫຍັງ? | ການປາກເວົ້າ; ສາສະໜາ; ການຊຸມນຸມຣວມກຸ່ມ; ຂ່າວສານ; ການຮ້ອງຂໍຕໍ່ຣັດຖະບານ |
| 7. How many amendments does the Constitution have? | Twenty-seven (27) |
| 7. ຣັດຖະທຳມະນູນມີຂໍ້ດັດແປງຈັກຂໍ້? | ຊາວເຈັດ (27) |
| 8. What did the Declaration of Independence do? | Announced our independence (from Great Britain); declared our independence (from Great Britain); said that the United States is free (from Great Britain) |
| 8. ການປະກາດເອກະຣາດໄດ້ເຮັດຫຍັງ? | ໄດ້ປະກາດຄວາມເປັນເອກະຣາດ (ຈາກປະເທດອັງກິດ); ໄດ້ແຈ້ງຄວາມເປັນເອກະຣາດຂອງພວກເຮົາ (ຈາກປະເທດອັງກິດ); ໄດ້ເວົ້າວ່າສະຫະຣັດເປັນອິສຣະ (ຈາກປະເທດອັງກິດ) |
| 9. What are <u>two</u> rights in the Declaration of Independence? | Life; liberty; pursuit of happiness |
| 9. ສິດທິສອງຢ່າງໃນການປະກາດເອກະຣາດນັ້ນແມ່ນຫຍັງ? | ມີຊີວິດຢູ່; ຄວາມອິສຣະພາບ; ການສະແຫວງຄວາມສຸກ |
| 10. What is freedom of religion? | You can practice any religion, or not practice a religion |
| 10. ອິສຣະພາບທາງສາສະໜາແມ່ນຫຍັງ? | ທ່ານສາມາດປະຕິບັດນັບຖື, ຫລືບໍ່ນັບຖືສາສະໜາໃດກໍ່ໄດ້ |
| 11. What is the economic system in the United States? | Capitalist economy; market economy |
| 11. ຣະບົບເສຖະກິດຢູ່ໃນສະຫະຣັດແມ່ນຫຍັງ? | ຣະບົບນາຍທຶນ; ເສຖະກິດແບບຕະຫລາດການຄ້າ |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 12. What is the "rule of law"? | Everyone must follow the law; leaders must obey the law; government must obey the law; no one is above the law. |
| 12. ແມ່ນຫຍັງຄື "ລະບຽບຂອງກົດໝາຍ"? | ທຸກຄົນຕ້ອງປະຕິບັດຕາມກົດໝາຍ;ຜູ້ນຳທັງຫລາຍຕ້ອງເຊື່ອຟັງກົດໝາຍ; ຣັດຖະບານກໍ່ຕ້ອງເຊື່ອຟັງກົດໝາຍ; ບໍ່ມີໃຜຈະຢູ່ເໜືອກົດໝາຍໄດ້. |
| **System of Government** | |
| ລະບົບຣັດຖະບານ | |
| 13. Name one branch or part of the government. | Legislative (Congress); executive (President); judicial (the courts) |
| 13. ໃຫ້ບອກຂະແໜງຫລືສ່ວນໜຶ່ງ ຂອງການປົກຄອງມາເບິ່ງດູ. | ນິຕິບັນຍັດ (ສະພາ); ບໍຣິຫານ (ປະທານາທິບໍດີ); ຕຸລາການ (ສານຕ່າງໆ) |
| 14. What stops one branch of government from becoming too powerful? | Checks and balances; separation of powers |
| 14. ແມ່ນຫຍັງຢຸດຢັບຢັ້ງຣັດຖະບານຂະແໜງໃດໜຶ່ງບໍ່ໃຫ້ມີອຳນາດເກີນໄປ? | ການກວດກາແລະຊັ່ງຊາຕ່າງໆ; ການແຍກອຳນາດຕ່າງໆ |
| 15. Who is in charge of the executive branch? | The President |
| 15. ໃຜເປັນຜູ້ບົງການຮັບຜິດຊອບໃນຂະແໜງບໍຣິຫານ? | ປະທານາທິບໍດີ |
| 16. Who makes federal laws? | Congress; Senate and House (of Representatives); (U.S. or national) legislature |
| 16. ໃຜວາງກົດໝາຍຣັດຖະບານກາງຕ່າງໆ? | ສະພາສູງ; ຄນະມົນຕຣີແລະຜູ້ແທນສະພາຕ່ຳ (ຂອງຜູ້ແທນຣາສະດອນ); (ຂອງສະຫະຣັດຫລືຂອງຊາດ) |
| 17. What are the two parts of the U.S. Congress? | The Senate and House (of Representatives) |
| 17. ສອງສ່ວນຂອງສະພາສະຫະຣັດແມ່ນຫຍັງ? | ສະພາສູງແລະສະພາຕ່ຳ (ຂອງຜູ້ແທນຣາສະດອນທັງຫລາຍ) |
| 18. How many U.S. Senators are there? | One hundred (100) |
| 18 ຜູ້ແທນສະພາສູງຂອງສະຫະຣັດ ມີຈັກທ່ານ? | ຮ້ອຍທ່ານ (100) |
| 19. We elect a U.S. Senator for how many years? | six (6) |
| 19. ພວກເຮົາເລືອກຕັ້ງເອົາຜູ້ແທນສະພາສູງເພື່ອກຳນົດຈັກປີ? | ຫົກປີ (6) |
| 20. Who is one of your state's U.S. Senators? | *(Answers will vary.)* Patty Murray; Maria Cantwell, Washington state - 2009 |
| 20. ໃຜແມ່ນໜຶ່ງຂອງຈຳນວນສະມາຊິກຜູ້ແທນສະພາສູງຂອງຣັດທ່ານ? | *(ຄຳຕອບອາດຕ່າງກັນ.)* ແພັດຕີ້ ເມີເຣ ແລະ; ມະເຣັຽ ແຄ້ນທ໌ແວວລ໌, ຣັດວໍຊິງຕັນ - 2009 |
| 21. The House of Representatives has how many voting members? | Four hundred thirty-five (435) |
| 21. ໃນສະພາຕ່ຳ ມີສະມາຊິກຜູ້ແທນຣາສະດອນຈັກທ່ານ? | ສີ່ຮ້ອຍສາມສິບຫ້າ (435) |
| 22. We elect a U.S. Representative for how many years? | Two (2) |
| 22. ພວກເຮົາເລືອກຜູ້ແທນສະພາຕ່ຳສຳຣັບຈັກປີ? | ສອງປີ (2) |
| 23. Name your U.S. Representative. | Answers will vary. For information on finding your elected official, you may go to www.house.gov/zip/ZIP2Rep.html or you may ask your local librarian. |
| 23. ຈົ່ງໄລ່ຊື່ຜູ້ແທນສະພາຕ່ຳສະຫະຣັດຂອງທ່ານມາເບິ່ງດູ. | ຈິມ ແມັກເດີມັອດ (ສ່ວນໃຫຍ່ຕາງໜ້າໃຫ້ເຂດຊີອາໂຕລ໌ແລະວາດຊານໄອແລນ - 2007) ເພື່ອຂໍ້ມູນຊອກຫາຜູ້ແທນຂອງທ່ານ, ທ່ານອາດເປີດເບິ່ງແວບໄຊທ໌ທີ່ www.house.gov/zip/ZIP2Rep.html ຫລືອາດຖາມຫໍສະມຸດໃນເຂດຂອງທ່ານ. |
| 24. Who does a U.S. Senator represent? | All people of that state |
| 24. ຜູ້ແທນສະພາສູງຕາງໜ້າໃຫ້ໃຜ? | ປະຊາກອນທຸກຄົນຂອງຣັດນັ້ນ |
| 25. Why do some states have more Representatives than other states? | (Because of) the state's population; (because) they have more people; (because) some states have more people |
| 25. ເປັນຫຍັງບາງຣັດຈຶ່ງມີຜູ້ແທນຫລາຍກວ່າຣັດອື່ນ? | (ຍ້ອນ) ຈຳນວນປະຊາກອນຂອງຣັດ; (ຍ້ອນ) ເຂົາເຈົ້າມີປະຊາກອນຫລາຍກວ່າ; (ຍ້ອນ) ບາງຣັດມີປະຊາຊົນຫລາຍກວ່າ |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 26. We elect a President for how many years? | Four (4) |
| 26. ພວກເຮົາເລືອກປະທານາທິບໍດີສຳລັບຈັກປີ? | ສີ່ (4) |
| 27. In what month do we vote for President? | November |
| 27. ພວກເຮົາເລືອກຕັ້ງປະທານາທິບໍດີເດືອນໃດ? | ເດືອນພຶດສະຈິກາ |
| 28. What is the name of the President of the United States now? | Barack Obama; Obama (2009) |
| 28. ຊື່ຂອງປະທານາທິບໍດີຜູ້ປະຈຸບັນແມ່ນຫຍັງ ? | ແບແຣັກ ໂອບະມາ; ໂອບະມາ (2009) |
| 29. What is the name of the Vice President of the United States now? | Joseph R. Biden, Jr.; Joe Biden; Biden |
| 29. ຊື່ຂອງຜູ້ຮອງປະທານາທິບໍດີຂອງສະຫະຣັດຜູ້ປະຈຸບັນແມ່ນຫຍັງ? | ໂຈເຊັຟ ອາຣ໌ ໄບເດັນ, ຈູເນັຽ.; ໂຈ ໄບເດັນ; ໄບເດັນ |
| 30. If the President can no longer serve, who becomes President? | The Vice President |
| 30. ຖ້າປະທານາທິບໍດີບໍ່ສາມາດດຳຣົງຕຳແໜ່ງສືບຕໍ່ໄປໄດ້, ໃຜຈະເປັນປະທານາທິບໍດີແທນ? | ຜູ້ຮອງປະທານາທິບໍດີ |
| 31. If both the President and the Vice President can no longer serve, who becomes President? | The Speaker of the House |
| 31.ຖ້າປະທານາທິບໍດີແລະຜູ້ຮອງປະທານາທິບໍດີບໍ່ສາມາດດຳຣົງຕຳແໜ່ງສືບຕໍ່ໄດ້, ໃຜຈະເປັນປະທານາທິບໍດີແທນ? | ປະທານສະພາຕ່ຳ |
| 32. Who is the Commander in Chief of the military? | The President |
| 32. ໃຜເປັນຫົວໜ້າບັນຊາການສູງສຸດຂອງກອງທັບສະຫະຣັດ? | ປະທານາທິບໍດີ |
| 33. Who signs bills to become laws? | The President |
| 33. ໃຜເຊັນຍັດຕິຕ່າງໆໃຫ້ເປັນກົດໝາຍ? | ປະທານາທິບໍດີ |
| 34. Who vetoes bills? | The President |
| 34. ໃຜປະຕິເສດເຊັນຍັດຕິຕ່າງໆໄດ້ | ປະທານາທິບໍດີ |
| 35. What does the President's Cabinet do? | Advise the President |
| 35. ຄນະຣັດຖະມົນຕຣີຂອງປະທານາທິບໍດີມີໜ້າທີ່ເຮັດຫຍັງ? | ໃຫ້ຄຳປຶກສາແກ່ ປະທານາທິບໍດີ |
| 36. What are <u>two</u> Cabinet-level positions? | Secretary of Agriculture; Secretary of Commerce; Secretary of Defense; Secretary of Education; Secretary of Energy; Secretary of Health and Human Services; Secretary of Homeland Security; Secretary of Housing and Urban Development; Secretary of Interior; Secretary of State; Secretary of Transportation; Secretary of Treasury; Secretary of Veterans' Affairs; Secretary of Labor; Attorney General |
| 36. ສອງຕຳແໜ່ງຣະດັບຣັດຖະມົນຕຣີແມ່ນຫຍັງແດ່? | ເລຂາກົມກະສິກຳ; ເລຂາການຄ້າ; ເລຂາປ້ອງກັນ; ເລຂາການສຶກສາ; ເລຂາພະລັງງານ; ເລຂາສາທາຣະນະສຸກແລະ ສັງຄົມສົງເຄາະ; ເລຂາປ້ອງກັນຄວາມປອດໄພບ້ານເກີດ; ເລຂາກົມເຄຫະສະຖານແລະການພັດທະນາຊົນນະບົດ ເລຂາກະຊວງພາຍໃນ; ເລຂາຂອງຣັດ; ເລຂາການຂົນສົ່ງ; ເລຂາກອງພັດສະດຸ; ເລຂາກົມນັກຣົບເກົ່າ; ເລຂາກົມແຮງງານ; ທະນາຍສາຍສາມັນ ຮອງປະທານາທິບໍດີ |
| 37. What does the judicial branch do? | Reviews laws; explains laws; resolves disputes (disagreements); decides if a law goes against the Constitution |
| 37. ຂະແໜງຕຸລາການແມ່ນເຮັດຫຍັງ? | ທົບທວນກົດໝາຍຕ່າງໆ; ອະທິບາຍກົດໝາຍຕ່າງໆ; ແກ້ໄຂຂໍ້ຖົກຖຽງຕ່າງໆ (ຄວາມບໍ່ຕົກລົງກັນຕ່າງໆ); ຕັດສິນວ່າກົດໝາຍຈະຂັດກັບທຳມະນູນຫລືບໍ່ |
| 38. What is the highest court in the United States? | The Supreme Court |
| 38. ສານສູງສຸດຢູ່ໃນສະຫະຣັດແມ່ນຫຍັງ? | ສານສູງສຸດ |
| 39. How many justices are on the Supreme Court? | Nine (9) |
| 39. ມີຜູ້ພິພາກສາຈັກທ່ານຢູ່ໃນສານສູງສຸດ? | ເກົ້າ (9) |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 40. Who is the Chief Justice of the United States? | John Roberts (John G. Roberts Jr.) (2009) |
| 40. ຫົວໜ້າສານສູງສຸດຢູ່ໃນສະຫະຣັດແມ່ນໃຜ? | ຈອນ ໂຣເບີດ (ຈອນ ຈີ. ໂຣເບີດສ໌ ຈູເນັຽ.) (2009) |
| 41. Under our Constitution, some powers belong to the federal government. What is <u>one</u> power of the federal government? | To print money; to declare war; to create an army; to make treaties |
| 41. ພາຍໄຕ້ຣັດຖະທຳມະນູນຂອງພວກເຮົາ,ບາງອຳນາດແມ່ນຂື້ນ ກັບຣັດຖະບານກາງ. ອຳນາດຢ່າງໜຶ່ງຂອງຣັດຖະບານກາງແມ່ນຫຍັງ? | ພິມເງິນ; ເພື່ອປະກາດສົງຄາມ; ການສ້າງຕັ້ງກອງທັບ; ການເຊັນ ສົນທິສັນຍາຕ່າງໆ |
| 42. Under our Constitution, some powers belong to the states. What is <u>one</u> power of the states? | Provide schooling and education; provide protection (police); provide safety (fire departments); give a driver's license; approve zoning and land use |
| 42. ພາຍໄຕ້ຣັດຖະທຳມະນູນຂອງພວກເຮົາ,ບາງອຳນາດແມ່ນຂື້ນ ກັບຣັດ. ອຳນາດຢ່າງໜຶ່ງຂອງຣັດຖະບານຂັ້ນຣັດແມ່ນຫຍັງ? | ອຳນວຍການໂຮງຮຽນແລະການສຶກສາ; ໃຫ້ການປ້ອງກັນ(ຕຳຣວດ);<br>ໃຫ້ຄວາມປອດໄພ (ກົມດັບເພີງ);<br>ອອກໃບຂັບຂີ່;ອະນຸມັດເຂດແດນແລະການໃຊ້ທີ່ດິນ |
| 43. Who is the Governor of your state? | *Answers will vary*. Christine Gregoire (Washington state - 2009) |
| 43. ໃຜເປັນເຈົ້າແຂວງຢູ່ຣັດຂອງທ່ານ? | *ຄຳຕອບອາດຈະຕ່າງກັນ*. ຄຣິສຕິນ ເກຣັກກວາ (ຣັດວໍຊິງຕັນ - 2009) |
| 44. What is the capital of your state? | Olympia (Washington state) |
| 44. ເມືອງຫລວງຂອງຣັດທີ່ທ່ານຢູ່ແມ່ນຫຍັງ? | ໂອລິມເປັຽ (ຣັດວໍຊິງຕັນ) |
| 45. What are the <u>two</u> major political parties in the United States? | Democratic and Republican |
| 45. 45. ສອງພັກການເມືອງໃຫຍ່ໃນສະຫະຣັດແມ່ນຫຍັງ? | ດີໂມເຄຣຕິກແລະຣີພັບບະລິກັນ |
| 46. What is the political party of the President now? | Democratic (Party) |
| 46. ພັກການເມືອງຂອງປະທານາທິບໍດີດຽວນີ້ແມ່ນຫຍັງ? | ປະຊາທິປະໄຕ (ພັກ) |
| 47. What is the name of the Speaker of the House of Representatives now? | John Boehner |
| 47. ຊື່ຂອງປະທານຜູ້ແທນສະພາຕ່ຳແມ່ນຫຍັງ? | John Boehner |
| **Rights and Responsibilities** | |
| **ສິດທິແລະຄວາມຮັບຜິດຊອບຕ່າງໆ** | |
| 48. There are four amendments to the Constitution about who can vote. Describe <u>one</u> of them. | Citizens 18 and older can vote; you don't have to pay (a poll tax) to vote; a male citizen of any race can vote; any citizen (women and men) can vote |
| 48. ມີສີ່ການດັດແປງໃນຣັດຖະທຳມະນູນກ່ຽວກັບຄົນຜູ້ມີສິດປ່ອນບັດ ເລືອກຕັ້ງໄດ້. ໃຫ້ອະທິບາຍໜຶ່ງໃນຈຳນວນເຫລົ່ານັ້ນມາເບິ່ງ. | ປະຊາຊົນສັນຊາດທັງຫລາຍທີ່ອາຍຸ 18 ປີຫລືແກ່ກວ່າສາມາດ<br>ປ່ອນບັດເລືອກຕັ້ງໄດ້; ທ່ານບໍ່ຕ້ອງຈ່າຍຄ່າ (ພາສີປ່ອນບັດ) ປ່ອນບັດເລືອກຕັ້ງ;<br>ຜູ້ຊາຍທີ່ເປັນສັນຊາດຈະເປັນຊົນເຜົ່າ<br>ໃດກໍ່ເລືອກຕັ້ງໄດ້; ຜູ້ທີ່ເປັນສັນຊາດໃຜໆ (ຍິງຫລືຊາຍທັງຫລາຍ)<br>ກໍ່ສາມາດປ່ອນບັດເລືອກຕັ້ງໄດ້ |
| 49. What is <u>one</u> responsibility that is only for U.S. citizens? | Serve on a jury; vote in a federal election |
| 49. ຄວາມຮັບຜິດຊອບຢ່າງໜຶ່ງສຳຣັບຄົນທີ່ເປັນສັນຊາດທໍ່ນັ້ນແມ່ນຫຍັງ? | ບໍຣິການເປັນລູກຂຸນ; ປ່ອນບັດເລືອກຕັ້ງຂັ້ນປະເທດ |
| 50. Name <u>one</u> right only for United States citizens? | Vote in a federal election; run for federal office |
| 50. ໃຫ້ບອກສິດທິໜຶ່ງສະເພາະຄົນທີ່ເປັນສັນຊາດທໍ່ນັ້ນ? | ປ່ອນບັດເລືອກຕັ້ງໃນຂັ້ນຣັດຖະບານກາງ; ສະມັກເຂົ້າຂັດເລືອກ<br>ແລ່ນວຽກເຮັດການກັບຣັດຖະບານກາງ |
| 51. What are <u>two</u> rights of everyone living in the United States? | Freedom of expression; freedom of speech; freedom of assembly; freedom to petition the government; freedom of worship; the right to bear arms |
| 51. ສອງສິດທິຂອງທຸກຄົນທີ່ຢູ່ໃນສະຫະຣັດແມ່ນຫຍັງ? | ອິສຣະພາບການອອກຄວາມເຫັນ; ອິສຣະພາບການປາກເວົ້າ;<br>ອິສຣະພາບການຊຸມນຸມ; ອິສຣະພາບການປະທ້ວງຕໍ່ຣັດຖະບານ;<br>ອິສຣະພາບການນັບຖື; ອິສຣະພາບກຳມະສິດຖືປືນ |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 52. What do we show loyalty to when we say the Pledge of Allegiance? | The United States; the flag |
| 52. ເຮົາສະແດງຄວາມພັກດີຕໍ່ຫຍັງ ເວລາເຮົາກ່າວຄຳສາບານຕົວ? | ປະເທດສະຫະຣັດອະເມຣິກາ; ທຸງຊາດ |
| 53. What is <u>one</u> promise you make when you become a United States citizen? | Give up loyalty to other countries; defend the Constitution and laws of the United States; obey the laws of the United States; serve in the U.S. military (if needed); serve (do important work for) the nation (if needed); be loyal to the United States |
| 53. ຄຳປະຕິຍານສິ່ງໜຶ່ງທີ່ທ່ານປະຕິຍານ ເວລາກາຍເປັນສັນຊາດແລ້ວນັ້ນ ຄືຫຍັງ? | ຍົກເລີກຄວາມພັກດີຕໍ່ປະເທດອື່ນ; ປົກປ້ອງຣັດຖະທຳມະນູນ ແລະກົດໝາຍຂອງສະຫະຣັດ; ເຊື່ອຟັງກົດໝາຍຕ່າງໆຂອງສະຫະຣັດ; ບໍຣິການຮັບໃຊ້ກອງທັບສະຫະຣັດ (ຖ້າຕ້ອງການ); ບໍຣິການຮັບໃຊ້ຊາດ (ເຮັດວຽກສຳຄັນໃຫ້) ຊາດ (ຖ້າຕ້ອງການ); ໃຫ້ຄວາມພັກດີຕໍ່ປະເທດສະຫະຣັດ |
| 54. How old do citizens have to be to vote for President? | Eighteen (18) and older |
| 54.ຄົນທີ່ເປັນສັນຊາດທັງຫລາຍຕ້ອງອາຍຸຈັກປີຈຶ່ງເລືອກປະທານາທິບໍດີໄດ້? | ສິບແປດປີ (18) ແລະແກ່ກວ່າ |
| 55. What are <u>two</u> ways that Americans can participate in their democracy? | Vote; join a political party; help with a campaign; join a civic or community group; give an elected official your opinion on an issue; call Senators and Representatives; publicly support or oppose anissue or policy; run for office; write to a newspaper |
| 55. <u>ສອງວິທີ</u>ທີ່ຊາວອະເມຣິກັນທັງຫລາຍປະກອບສ່ວນໃນ ປະຊາຕິປະໄຕຂອງເຂົາເຈົ້າ ແມ່ນຫຍັງ? | ເລືອກຕັ້ງ; ຮ່ວມໃນພັກການເມືອງ; ຊ່ອຍໂຄສະນາຫາສຽງ; ຮ່ວມກຸ່ມກັບພົນລະເມືອງຫລືຊຸມຊົນ; ໃຫ້ຄວາມເຫັນແກ່ເຈົ້າໜ້າທີ່ໆຖືກຄັດເລືອກໃນບັນຫາຕ່າງໆ; ໂທຫາຜູ້ແທນສະພາສູງ ແລະສະພາຕ່ຳ; ອູ້ມຊູຫລືຄັດຄ້ານຢ່າງອອກໜ້າ ຕໍ່ບັນຫາຫລືນະໂຍບາຍ; ສະມັກເປັນເຈົ້າໜ້າທີ່; ຂຽນໜັງສືພິມ |
| 56. When is the last day you can send in federal income tax forms? | April 15 |
| 56. ມື້ສຸດທ້າຍທີ່ທ່ານສາມາດສົ່ງໃບຣາຍງານພາສີຣາຍ ໄດ້ປະຈຳປີຂອງຊາດແມ່ນມື້ໃດ? | ວັນທີ 15, ເດືອນເມສາ |
| 57. When must all men register for the Selective Service? | At age 18; between the ages of 18 and 26 |
| 57. ເວລາໃດທີ່ຜູ້ຊາຍທຸກຄົນຕ້ອງລົງທະບຽນຮັບໃຊ້ກອງທັບ? | ເວລາອາຍຸ 18 ປີ; ຣະຫວ່າງອາຍຸ 18 ຫາ 20 ປີ |
| **AMERICAN HISTORY QUESTIONS** | |
| **ຄຳຖາມປະວັດສາດຂອງຊາວອະເມຣິກັນ** | |
| **Colonial Period and Independence** | |
| **ສະໄໝຫົວເມືອງຂຶ້ນຕ່າງໆແລະຄວາມເປັນເອກະຣາດ** | |
| 58. What is <u>one</u> reason colonists came to America? | Freedom; political liberty; religious freedom; economic opportunity; practice their religion; escape persecution |
| 58. ເຫດຜົນໜຶ່ງທີ່ພວກອານານິຄົມທັງຫລາຍໄດ້ມາອະເມຣິກາຄືຫຍັງ? | ຄວາມອິສຣະພາບ; ອິສຣະດ້ານການເມືອງ; ອິສຣະດ້ານສາສະໜາ; ມີໂອກາດທາງດ້ານເສຖະກິດ; ປະຕິບັດສາສະໜາຂອງເຂົາເຈົ້າ; ລົບໄພປະຫານຊີວິດ |
| 59. Who lived in America before the Europeans arrived? | Native Americans; American Indians |
| 59. ໃຜໄດ້ຢູ່ໃນອະເມຣິການມາກ່ອນໆຊາວຢູໂຣບມາເຖິງ? | ຊາວອາເມຣິກັນພື້ນເມືອງ; ຊາວອະເມຣິກັນອິນດຽນ |
| 60. What group of people was taken to America and sold as slaves? | Africans; people from Africa |
| 60. ຄົນກຸ່ມໃດທີ່ຖືກນຳມາອະເມຣິກາແລ້ວຖືກຂາຍເປັນຂ້າທາດ? | ຊາວອາຟະຣິກກັນ; ຄົນມາຈາກອາຟະຣິກກາ |
| 61. Why did the colonists fight the British? | Because of high taxes (taxation without representation); because the British army stayed in their houses (boarding, quartering); because they didn't have self-government |
| 61. ເປັນຫຍັງຊາວອານານິຄົມຈຶ່ງຕໍ່ສູ້ກັບປະເທດອັງກິດ? | ຍ້ອນຄ່າພາສີສູງ (ການພາສີທີ່ບໍ່ມີການແທນຕົວ); ຍ້ອນກອງທັບອັງກິດຢູ່ໃນບ້ານເຮືອນຂອງເຂົາເຈົ້າ(ຢູ່ຮວມ, ຄົ້ນຄວ້າ); ຍ້ອນເຂົາເຈົ້າບໍ່ມີການປົກຄອງໂດຍຕົນເອງ |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 62. Who wrote the Declaration of Independence? | (Thomas) Jefferson |
| 62. ໃຜໄດ້ຂຽນບົດປະກາດຄວາມເປັນເອກະຣາດ? | (ທໍມັສ) ແຈັບເຟີຊັນ |
| 63. When was the Declaration of Independence adopted? | July 4, 1776 |
| 63. ການປະກາດເອກະຣາດໄດ້ຖືກຮັບຮອງເອົາເມື່ອໃດ? | ເດືອນກໍຣະກະດາ ວັນທີ 4, 1776 |
| 64. There were 13 original states. Name <u>three</u>. | New Hampshire; Massachusetts; Rhode Island; Connecticut; New York; New Jersey; Pennsylvania; Delaware; Maryland; Virginia; North Carolina; South Carolina; Georgia |
| 64. ໄດ້ມີຢູ່ 13 ຣັດທຳອິດ. ໃຫ້ບອກຊື່ສາມຣັດ. | ນິວແຮັມເຊີ; ມັດຊາຊູແຊັດສ; ໂຣດໄອແລນດ໌; ຄັນເນັກຕິກັດ ນິວຢ໊ອກ, ນິວເຈີຊີ, ເພັນຊີລເວເນັຽ, ແດລລະແວ, ແມຣີແລນດ໌ ເວີຈີເນັຽ, ນອດແຄໂຣໄຣນາ, ເຊົາທ໌ແຄໂຣໄຣນາ,ຈໍເຈັຽ, |
| 65. What happened at the Constitutional Convention? | The Constitution was written; the Founding Fathers wrote the Constitution |
| 65. ມີຫຍັງໄດ້ເກີດຂຶ້ນທີ່ກອງປະຊຸມເຣື່ອງຣັດຖະທຳມະນູນ? | ຣັດຖະທຳມະນູນໄດ້ຖືກຂຽນຂຶ້ນ; ບິດາເຄົ້າທັງຫລາຍຜູ້ໄດ້ຄິດຄົ້ນ ຂຽນຮ່າງທຳມະນູນຂຶ້ນ |
| 66. When was the Constitution written? | 1787 |
| 66. ຣັດຖະທຳມະນູນໄດ້ຖືກຂຽນຂຶ້ນເມື່ອໃດ? | 1787 |
| 67. The Federalist Papers supported the passage of the U.S. Constitution. Name <u>one</u> of the writers. | (James) Madison; (Alexander) Hamilton; (John) Jay; Publius |
| 67. ບົດບັນຍາຍເອກະສານຂອງຣັດຖະບານກາງໄດ້ສະນັບສະໜູນເຖິງຕອນຂອງຣັດຖະທຳມະນູນຂອງສະຫະຣັດ. ໃຫ້ບອກຊື່ຜູ້ໜຶ່ງໃນບັນດານັກຂຽນທັງຫລາຍ. | (ເຈມສ໌) ເມດິສັນ; (ອາເລກຊານເດີ) ແຮມິວຕັນ; (ຈອນ) ເຈ; ພັວບລິສ |
| 68. What is <u>one</u> thing Benjamin Franklin is famous for? | U.S. diplomat; oldest member of the Constitutional Convention; first Postmaster General of the United States; writer of “Poor Richard’s Almanac”; started the first free libraries |
| 68. ສິ່ງໜຶ່ງທີ່ທ່ານເບັນຈະມິນແຟຼັງກລິນ ມີຊື່ສຽງຍ້ອນນັ້ນແມ່ນຫຍັງ? | ເປັນນັກການທູດສະຫະຣັດ; ສະມາຊິກກອງປະຊຸມຣັດຖະທຳມະນູນຜູ້ອາວຸໂສສຸດ; ເປັນນາຍພົນກົມໄປສະນີຜູ້ທຳອິດຂອງສະຫະຣັດ; ນັກຂຽນຂອງ “ພົວ ຣິເຈີດອໍມາແນັກ”; ທີ່ໄດ້ເລີ່ມເປີດປ່ອຍຄວາມເປັນອິສຣະຕ່າງໆທຳອິດ. |
| 69. Who is the “Father of Our Country”? | (George) Washington |
| 69. ໃຜເປັນ “ບິດາຂອງປະເທດພວກເຮົາ”? | (ຈອດຈ໌) ວໍຊິງຕັນ |
| 70. Who was the first President? | (George) Washington |
| 70. ໃຜໄດ້ເປັນປະທານາທິບໍດີຜູ້ທຳອິດ? | (ຈອດຈ໌) ວໍຊິງຕັນ |
| **1800s** | |
| **ສະໄໝປີ 1800s** | |
| 71. What territory did the U.S. buy from France in 1803? | The Louisiana Territory; Louisiana |
| 71. ດິນແດນຕອນໃດທີ່ສະຫະຣັດໄດ້ຊື້ ຈາກຝຣັ່ງເສດໃນປີ 1803? | ເຂດນ້ຳແດນດິນລຸຍຊິແອນນາ; ລຸຍຊິແອນນາ |
| 72. Name <u>one</u> war fought by the United States in the 1800s. | War of 1812; Mexican-American War; Civil War; Spanish-American War |
| 72. ໃຫ້ບອກສົງຄາມໜຶ່ງຂອງຣະຫວ່າງປີ 1800. | ສົງຄາມປີ 1812; ສົງຄາມຣະຫວ່າງອະເມຣິກັນແລະແມັກຊິແກັນ; ສົງຄາມປະຊາຊົນ; ສົງຄາມຣະຫວ່າງອະເມຣິກັນແລະສະແປນິສ |
| 73. Name the U.S. war between the North and the South. | The Civil War; the War between the States |
| 73.ໃຫ້ບອກເຣື່ອງສົງຄາມໃນສະຫະຣັດຣະຫວ່າງພາກເໜືອແລະພາກໄຕ້ | ສົງຄາມປະຊາຊົນ; ສົງຄາມຣະຫວ່າງຣັດ |
| 74. Name <u>one</u> problem that led to the Civil War. | Slavery; economic reasons; states’ rights |
| 74. ໃຫ້ບອກເຖິງບັນຫາທີ່ນຳໃຫ້ເກີດສົງຄາມປະຊາຊົນ. | ການຄ້າທາດ; ເຫດຜົນຕ່າງໆທາງດ້ານເສຖະກິດ; ສິດທິຕ່າງໆຂອງຣັດ |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 75. What was <u>one</u> important thing that Abraham Lincoln did? | Freed the slaves (Emancipation Proclamation); saved (or preserved) the Union; led the United States during the Civil War |
| 75. ສິ່ງສຳຄັນຢ່າງໜຶ່ງທີ່ແອບບຣາແຮັມລິງກັນໄດ້ເຮັດ? | ໄດ້ປົດປ່ອຍຂ້າທາດ (ການປະກາດປົດປ່ອຍເພື່ອຄວາມອິສຣະ); ໄດ້ຊ່ອຍເອົາ (ຫລືໄດ້ສະຫງວນໃວ້) ປະເທດສະຫະຣັດ; ໄດ້ເປັນຜູ້ນຳພາປະເທດສະຫະຣັດໃນສະໄໝສົງຄາມປະຊາຊົນ |
| 76. What did the Emencipation Proclamation do? | Freed the slaves; freed slaves in the Confederacy; freed slaves in the Confederate states; freed slaves in most Southern states |
| 76. ຄຳປະກາດປົດປ່ອຍເປັນອິສຣະນັ້ນໄດ້ເຮັດຫຍັງແດ່? | ໄດ້ປົດປ່ອຍຂ້າທາດ; ໄດ້ປົດປ່ອຍຂ້າທາດໃນການສັນຍາຮ່ວມພັນທະໄມຕຣີ; ໄດ້ປົດປ່ອຍຂ້າທາດໃນຣັດພາກໄຕ້ທັງຫລາຍ; ໄດ້ປົດປ່ອຍຂ້າທາດໃນຣັດພາກໄຕ້ທັງຫລາຍເປັນສ່ວນໃຫຍ່ |
| 77. What did Susan B. Anthony do? | Fought for women's rights; fought for civil rights |
| 77. ຊູຊານ ບີ ແອນໂທນີ ໄດ້ເຮັດຫຍັງ? | ໄດ້ຕໍ່ສູ້ເພື່ອສິດທິຕ່າງໆຂອງຜູ້ຍິງ; ໄດ້ຕໍ່ສູ້ເພື່ອສິດທິຕ່າງໆຂອງປະຊາຊົນ |
| **Recent American History and Other Important Historical Information** | |
| **ປະວັດສາດປະຈຸບັນແລະຂໍ້ມູນປະວັດສາດສຳຄັນຢ່າງອື່ນ** | |
| 78. Name <u>one</u> war fought by the United States in the 1900s. | World War I; World War II; Korean War; Vietnam War; (Persian) Gulf War |
| 78. ໃຫ້ບອກຊື່ສົງຄາມໜຶ່ງທີ່ໄດ້ຕໍ່ສູ້ໂດຍອະເມຣິກັນໃນສະໄໝປີ 1900. | ສົງຄາມໂລກຄັ້ງທີ່ໜຶ່ງ; ສົງຄາມໂລກຄັ້ງທີ່ສອງ; ສົງຄາມເກົາຫລີ; ສົງຄາມວຽດນາມ; ສົງຄາມເກາະ(ເປີຊຽນ) |
| 79. Who was President during World War I? | (Woodrow) Wilson |
| 79. ໃຜໄດ້ເປັນປະທານາທິບໍດີໃນສະໄໝສົງຄາມໂລກຄັ້ງທີ່ໜຶ່ງ? | (ວຸດໂດຣ) ວິລຊັນ |
| 80. Who was President during the Great Depression and World War II? | (Franklin) Roosevelt |
| 80. ໃຜໄດ້ເປັນປະທານາທິບໍດີໃນສະໄໝເກີດຄວາມກົດດັນຈິດໃຈຢ່າງໃຫຍ່ຫລວງ ແລະສົງຄາມໂລກຄັ້ງທີ່ສອງ? | (ແຟຣັງກະລິນ) ໂຣສແວລຕ໌ |
| 81. Who did the United States fight in World War II? | Japan, Germany, and Italy |
| 81. ໃນສະໄໝສົງຄາມໂລກຄັ້ງທີ່ສອງປະເທດສະຫະຣັດໄດ້ຕໍ່ສູ້ກັບໃຜ? | ຍີ່ປຸ່ນ, ເຢັຽຣະມັນ, ແລະອິຕາລີ |
| 82. Before he was President, Eisenhower was a general. What war was he in? | World War II |
| 82. ກ່ອນເພິ່ນເປັນປະທານາທິບໍດີ, ໄອເຊັນຮາວເອີເປັນນາຍພົນ. ສົງຄາມໃດທີ່ເພິ່ນໄດ້ເຂົ້າຮ່ວມນຳ? | ສົງຄາມໂລກຄັ້ງທີ່ສອງ |
| 83. During the Cold War, what was the main concern of the United States? | Communism |
| 83. ໃນສະໄໝສົງຄາມເຢັນ, ແມ່ນຫຍັງເປັນຂໍ້ຂ້ອງໃຈສຳຄັນສຸດຂອງສະຫະຣັດ? | ຣະບອບຄອມມິວນິດ |
| 84. What movement tried to end racial discrimination? | Civil rights (movement) |
| 84. ການເຄື່ອນໃຫວໃດທີ່ພະຍາຍາມໃຫ້ສິ້ນສຸດການແບ່ງຊັ້ນວັນນະ? | ສິດທິປະຊາຊົນຕ່າງໆ (ການເຄື່ອນໄຫວ) |
| 85. What did Martin Luther King Jr. do? | Fought for civil rights; worked for equality for all Americans |
| 85. ມາຕິນລຸເທີຄິງ ຈູເນັຽໄດ້ເຮັດສິ່ງໃດ? | ໄດ້ຕໍ່ສູ້ສົງຄາມປະຊາຊົນ; ໄດ້ເຮັດວຽກເພື່ອຄວາມສະເໝີພາບແກ່ຊາວອະເມຣິກັນທັງໝົດ |
| 86. What major event happened on September 11, 2001 in the United States? | Terrorists attacked the United States |
| 86. ເຫດການໃຫຍ່ໃດທີ່ເກີດຂຶ້ນໃນສະຫະຣັດ ໃນວັນທີ 11 ເດືອນ ກັນຍາ, 2001? | ພວກກໍ່ການຮ້າຍທັງຫລາຍໄດ້ທຳຮ້າຍສະຫະຣັດ |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 87. Name <u>one</u> American Indian tribe in the United States. (USCIS officer will be supplied with a list of federally recognized American Indian tribes) | Cherokee; Navajo; Sioux; Chippewa; Choctaw; Pueblo; Apache; Iroquois; Creek; Blackfeet; Seminole; Cheyenne; Arawak; Shawnee; Mohegan; Huron; Oneida; Lakota; Crow; Teton; Hopi; Inuit |
| 87. ໃຫ້ບອກຊື່ເຜົ່າອິນເດັຽເຜົ່າໜຶ່ງໃນສະຫະຣັດ (ເຈົ້າໜ້າທີ່ ຫ້ອງການ USCIS ຈະໃຫ້ບັນຊີລາຍຊື່ຂອງເຜົ່າອະເມຣິກັນອິນເດັຽທີ່ຣັດຖະບານກາງຮັບຮູ້) | ຊີໂຣກີ; ນາວາໂຈ; ສິອຸດຊ໌; ຊິບປີວາ; ໂຊັກຕໍ;ພັບໂບລ; ອາປາເຊ; ອີໂຣກອຍ; ຄຣີກ; ບແລັກຟີຕ; ເຊີມີໂນລີ; ຊີຢີນ; ອະຣະວັກ; ເຊົານີ; ໂມຫີແກນ; ຮູຣອນ; ໂອນິດາ; ລາໂກຕ້າ; ໂຄຣວ; ຕີຕັນ; ໂຮປີ; ໄອີນຸຕ |
| **INTEGRATED CIVICS QUESTIONS** | |
| ຄຳຖາມພົນລະເມືອງຕ່າງໆທີ່ຣວມກັນ | |
| **Geography** | |
| ພູມີສາດ | |
| 88. Name <u>one</u> of the two longest rivers in the United States. | Missouri (River); Mississippi (River) |
| 88. ໃຫ້ບອກສອງສາຍແມ່ນ້ຳທີ່ຍາວສຸດຢູ່ໃນສະຫະຣັດມາເບິ່ງ. | ມິດຊູຣີ (ແມ່ນ້ຳ); ມິດຊີຊິບປີ້ (ແມ່ນ້ຳ) |
| 89. What ocean is on the West Coast of the United States? | Pacific (Ocean) |
| 89. ມະຫາສະມຸດໃດທີ່ຢູ່ທາງຝັ່ງຕາເວັນຕົກຂອງສະຫະຣັດ? | ແພຊີຟິກ (ມະຫາສະມຸດ) |
| 90. What ocean is on the East Coast of the United States? | Atlantic (Ocean) |
| 90. ມະຫາສະມຸດໃດທີ່ຢູ່ທາງຝັ່ງຕາເວັນອອກຂອງສະຫະຣັດ? | ແອັດແລັນຕິກ (ມະຫາສາມຸດ) |
| 91. Name <u>one</u> U.S. territory. | Puerto Rico; U.S. Virgin Islands; American Samoa; Northern Mariana Islands; Guam |
| 91. ໃຫ້ບອກເຂດນ້ຳແດນດິນໜຶ່ງຂອງສະຫະຣັດ. | ເພີໂຕຣີໂກ; ຢູແອສ ເວີຈິນໄອແລນດ໌; ອະເມຣິກັນຊາມົວ; ນອດເທີນແມຣີແອນນາໄອແລນດ໌; ກູອວມ |
| 92. Name <u>one</u> state that borders Canada. | Maine; New Hampshire; Vermont; New York; Pennsylvania; Ohio; Michigan; Minnesota; North Dakota; Montana; Idaho; Washington; Alaska |
| 92. ໃຫ້ບອກຣັດໜຶ່ງທີ່ມີຊາຍແດນຕິດກັບແຄນາດາ. | ເມນ; ນິວແຮັມເຊີ; ເວີມັນ; ນິວຢັອກ; ເພັນຊິລເວເນັຽ; ໂອໄຮໂອ; ມີຊິແກັນ; ມິນີໂຊຕາ; ນອດດາໂຄຕາ; ມັນເທນາ; ໄອດາໂຮ; ວໍຊິງຕັນ; ອາລາສະກ້າ |
| 93. Name <u>one</u> state that borders Mexico. | California; Arizona; New Mexico; Texas |
| 93. ໃຫ້ບອກຣັດໜຶ່ງທີ່ມີຊາຍແດນຕິດກັບແມັກຊີໂກ. | ຄາລິຟໍເນັຽ; ອາຣີໂຊນາ; ນິວແມັກຊີໂກ; ເທັກຊັສ |
| 94. What is the capital of the United States? | Washington, D.C. |
| 94. ເມືອງຫລວງຂອງປະເທດສະຫະຣັດແມ່ນຫຍັງ? | ວໍຊິງຕັນ ດີ ຊີ |
| 95. Where is the Statue of Liberty? | New York (Harbor); Liberty Island [Also acceptable are New Jersey, near New York City, and on the Hudson (River).] |
| 95. ອະນຸສາວະຣີເທພີແຫ່ງສັນຕິພາບຢູ່ໃສ? | ນິວຢັອກ (ທ່າເຮືອ); ເກາະສັນຕິພາບ [ແລະກໍ່ເປັນອັນຮັບໄດ້ວ່າ ນິວເຈີຊີ, ໃກ້ກັບເມືອງນິວຢັອກ, ແລະຢູ່ເທິງຣັດສັນ (ແມ່ນ້ຳ).] |
| **Symbols** | |
| ເຄື່ອງໝາຍຕ່າງໆ | |
| 96. Why does the flag have 13 stripes? | Because there were 13 original colonies; because the stripes represent the original colonies |
| 96. ເປັນຫຍັງທຸງຈຶ່ງມີ 13 ແຊກ? | ຍ້ອນມີ 13 ຣັດອານານິຄົມທຳອິດ, ຍ້ອນລາຍແຊກສັນຍາໝາຍແທນຣັດອານານິຄົມທຳອິດ |
| 97. Why does the flag have 50 stars? | Because there is one star for each state; because each star represents a state; because there are 50 states |
| 97. ເປັນຫຍັງທຸງຈຶ່ງມີດາວ 50 ດວງ? | ຍ້ອນດາວໜຶ່ງໜ່ວຍສຳຣັບແຕ່ລະຣັດ; ຍ້ອນດາວແຕ່ລະໜ່ວຍແທນແຕ່ລະຣັດ; ຍ້ອນມີ 50 ຣັດ |
| 98. What is the name of the national anthem? | The Star-Spangled Banner |
| 98. ຊື່ຂອງເພງຊາດແມ່ນຫຍັງ? | ເດີສະຕາສະແປັງໂກແບນເນີ |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| **Holidays** | |
| ວັນພັກຕ່າງໆ | |
| 99. When do we celebrate Independence Day? | July 4 |
| 99. ເມື່ອໃດພວກເຮົາສະເລີມສະຫລອງວັນເອກະຣາດ? | ວັນທີ 4 ເດືອນກໍຣະກະດາ |
| 100. Name <u>two</u> national U.S. holidays. | New Year's Day; Martin Luther King Jr. Day; Presidents Day; Memorial Day; Independence Day; Labor Day; Columbus Day; Veterans Day; Thanksgiving; Christmas |
| 100. ໃຫ້ບອກສອງວັນພັກຂອງຊາດມາເບິ່ງ. | ວັນປີໃໝ່; ວັນມາຕິນລູເທີຄິງ; ວັນປະທານາທິບໍດີ; ວັນຣະຣຶກຊົງຈຳ; ວັນເອກະຣາດ; ວັນກຳມະກອນ; ວັນໂຄລຳບັສ; ວັນນັກຣົບເກົ່າ; ວັນຂອບໃຈ; ວັນຄຣິສມາສ |

## ຄຳຖາມຕ່າງໆເພື່ອໃຫ້ຜູ້ຮ້ອງຂໍທີ່ເປັນອາວຸໂສທັງຫລາຍຮຽນເພື່ອຕຽມການສອບເສັງສະບັບໃໝ່

ຄົນທີ່ອາຍຸເກີນ 65 ປີ ແລະແລະໄດ້ອາໄສຢູ່ຢ່າງຖືກຕ້ອງຕາມກົດໝາຍໂດຍຖາວອນ (ມີບັດຂຽວ) ແລະເປັນຜູ້ໄດ້ຢູ່ຢ່າງຖາວອນຖືກຕ້ອງຕາມກົດໝາຍ ຢ່າງໜ້ອຍ 20 ປີແລະມີເງື່ອນໄຂຈຳເປັນຖືກຕ້ອງແລະມີຄວາມຮູ້ຕໍ່ຄວາມເປັນພົນລະເມືອງຕ່າງໆ (ປະວັດສາດແລະຣັດຖະບານ). ພວກເພິ່ນກໍ່ຍັງມີເງືອນໄຂ ສອບເປັນພາສາຂອງເພິ່ນເອງໄດ້. ໃຫ້ເບິ່ງ *ວັກ E* ເພື່ອຂ່າວຂໍ້ມູນເພີ່ມເຕີມ.

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 1. What is <u>one</u> right or freedom from the First Amendment? | Speech; religion; assembly; press; petition the government |
| 1. ແມ່ນຫຍັງຄືສິດທິຫລືອິສຣະພາບໜຶ່ງຈາກທຳມະນູນທີ່ປ່ຽນແປງ ເທືອທຳອິດ? | ການປາກເວົ້າ; ສາສະໜາ; ການຊຸມນຸມຣວມກຸ່ມ; ຂ່າວສານ; ການຮ້ອງຂໍຕໍ່ຣັດຖະບານ |
| 2. What is the economic system in the United States? | Capitalist economy; market economy |
| 2. ຣະບົບເສຖະກິດຢູ່ໃນສະຫະຣັດແມ່ນຫຍັງ? | ຣະບົບນາຍທຶນ; ເສຖະກິດແບບຕະຫລາດການຄ້າ |
| 3. Name <u>one</u> branch or part of the government. | Legislative (Congress); executive (President); judicial (the courts) |
| 3. ໃຫ້ບອກຊື່ຂະແໜງຫລືພາກສ່ວນໜຶ່ງຂອງຣັດຖະບານ. | ນິຕິບັນຍັດ (ຣັດຖະສະພາ); ບໍຣິຫານ(ປະທານາທິບໍດີ); ຕຸລາການ(ສານທັງຫລາຍ) |
| 4. What are the <u>two</u> parts of the U.S. Congress? | The Senate and House (of Representatives) |
| 4. ສອງສ່ວນຂອງສະພາຄືຫຍັງ? | ສະພາສູງແລະສະພາຕ່ຳ (ຂອງຜູ້ແທນຣາສະດອນທັງຫລາຍ) |
| 5. Who is <u>one</u> of your state's U.S. Senators? | Patty Murray; Maria Cantwell (Washington state - 2009) |
| 5. ຈຳນວນໜຶ່ງຂອງຜູ້ແທນສະພາສູງຈາກຣັດຂອງທ່ານຄືໃຜ? | ແພັດຕີ້ ເມີເຣ; ມະເຣັຽ ແຄ້ນແວລ (ຣັດວໍຊິງຕັນ - 2009) |
| 6. In what month do we vote for President? | November |
| 6. ເດືອນໃດພວກເຮົາເລືອກປະທານາທິບໍດີ? | ເດືອນພຶດສະຈິກາ |
| 7. What is the name of the President of the U.S. now? | George W. Bush; George Bush; Bush (2007) |
| 7. ຊື່ຂອງປະທານາທິບໍດີຂອງສະຫະຣັດດຽວນີ້ແມ່ນຫຍັງ? | ຈອດຈ໌ ດັບໂບຢູ ບູສ; ຈອດຈ໌ ບູສ; ບູສ (2007) |
| 8. What is the capital of your state? | Olympia (Washington state) |
| 8. ເມືອງຫລວງຂອງຣັດທີ່ທ່ານຢູ່ແມ່ນຫຍັງ? | ໂອລິມເປັຽ (ຣັດວໍຊິງຕັນ) |
| 9. What are the <u>two</u> major political parties in the United States? | Democratic and Republican |
| 9. ພັກການເມືອງໃຫຍ່ສອງພັກຢູ່ໃນສະຫະຣັດດຽວນີ້ຄືຫຍັງ? | ເດໂມຄະແຣຕິກແລະຣີພັບບລິກກັນ |
| 10. What is <u>one</u> responsibility that is only for U.S. citizens? | Serve on a jury; vote |
| 10. ແມ່ນຫຍັງຄືຄວາມຮັບຜິດຊອບໜຶ່ງສຳຣັບຜູ້ທີ່ເປັນສັນຊາດທ່ານັ້ນ? | ບໍຣິການເປັນລູກຂຸນ; ປ່ອນບັດເລືອກຕັ້ງ |
| 11. How old do citizens have to be to vote for President? | Eighteen (18) and older |
| 11. ຄົນທີ່ເປັນສັນຊາດຕ້ອງອາຍຸທໍ່ໃດຈຶ່ງເລືອກຕັ້ງປະທານາທິບໍດີໄດ້? | ສິບແປດ (18) ແລະແກ່ກວ່າ |
| 12. When is the last day you can send in federal income tax forms? | April 15 |
| 12. ມື້ສຸດທ້າຍທີ່ທ່ານສາມາດສົ່ງໃບລາຍງານພາສີຣາຍໄດ້ກັບຣັດຖະບານ ກາງແມ່ນມື້ໃດ? | ວັນທີ 15 ເດືອນເມສາ |

| ຄຳຖາມຕ່າງໆ | ຄຳຕອບຕ່າງໆ |
|---|---|
| 13. Who was the first President? | (George) Washington |
| 13. ໃຜໄດ້ເປັນປະທານາທິບໍດີຄົນທຳອິດ? | (ຈອດຈ໌) ວໍຊິງຕັນ |
| 14. What was <u>one</u> important thing that Abraham Lincoln did? | Freed the slaves (Emancipation Proclamation); saved (preserved) the Union; led U.S. during the Civil War |
| 14. ສິ່ງສຳຄັນໜຶ່ງທີ່ທ່ານແອບບຣາຮຳລິງກັນໄດ້ເຮັດແມ່ນຫຍັງ? | ໄດ້ປົດປ່ອຍຂ້າທາດທັງຫລາຍ (ການປົດປ່ອຍອິສຣະ); ໄດ້ຊ່ອຍເອົາ (ສະຫງວນໄວ້) ປະເທດ; ນຳພາສະຫະຣັດໃນສະໄໝສົງຄາມປະຊາຊົນ |
| 15. Name <u>one</u> war fought by the United States in the 1900s. | World War I; World War II; Korean War; Vietnam War; (Persian) Gulf War |
| 15. ໃຫ້ບອກຊື່ສົງຄາມທີ່ໄດ້ຕໍ່ສູ້ໂດຍສະຫະຣັດໃນສະໄໝປີ 1900. | ສົງຄາມໂລກຄັ້ງທີ່ໜຶ່ງ; ສົງຄາມໂລກຄັ້ງທີ່ສອງ; ສົງຄາມເກົາຫລີ; ສົງຄາມວຽດນາມ; ສົງຄາມເກາະ(ເປີຊຽນ) |
| 16. What did Martin Luther King Jr. do? | Fought for civil rights; worked for equality for all Americans |
| 16. ມາຕິນລູເທີຄິງຈູເນັຽໄດ້ເຮັດຫຍັງແດ່? | ຕໍ່ສູ້ເພື່ອສິດທິປະຊາຊົນ; ໄດ້ເຮັດເພື່ອຄວາມອິສຣະພາບຂອງວະເມຣິກັນທຸກຄົນ |
| 17. What is the capital of the United States? | Washington, D.C. |
| 17. ເມືອງຫລວງຂອງສະຫະຣັດແມ່ນຫຍັງ? | ວໍຊິງຕັນ ດີ ຊີ. |
| 18. Where is the Statue of Liberty? | New York (Harbor); Liberty Island [Also acceptable are New Jersey, near New York City, and on the Hudson (River).] |
| 18. ອະນຸສາວະຣີເທພີແຫ່ງສັນຕິພາບຢູ່ໃສ? | ນິວຢ໋ອກ (ທ່າເຮືອ); ເກາະສັນຕິພາບ [ແລະກໍ່ເປັນອັນຮັບໄດ້ວ່າ ນິວເຈີຊີ, ໃກ້ກັບເມືອງນິວຢ໋ອກ, ແລະຢູ່ເທິງຮັດສັນ (ແມ່ນ້ຳ).] |
| 19. Why does the flag have 50 stars? | Because there is one star for each state; because each star represents a state; because there are 50 states |
| 19. ເປັນຫຍັງທຸງຈຶ່ງມີ 50 ດວງດາວ? | ຍ້ອນມີດາວໜຶ່ງໜ່ວຍສຳຣັບແຕ່ລະຣັດ; ຍ້ອນດາວແຕ່ລະໜ່ວຍແທນຣັດແຕ່ລະຣັດ; ຍ້ອນມີ 50 ຣັດ |
| 20. When do we celebrate Independence Day? | July 4 |
| 20. ພວກເຮົາສະເລີມສະຫລອງວັນເອກະຣາດມື້ໃດ? | ວັນທີ 4, ເດືອນກໍຣະກະດາ |